**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 229 /ລບ

ນະຄອນຫລວງວຽງຈັນ, ວັນທີ 31.5.2012

# ດຳລັດ
# ແນະນຳປະຕິບັດ ກົດໝາຍວ່າດ້ວຍການປ້ອງກັນພືດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ ພະຈິກ 2012 ສະບັບເລກທີ 10/ລບ, ລົງວັນທີ 23/12/2011;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0764/ກປ ລົງວັນທີ 21 ພຶດສະພາ 2012.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ວາງອອກເພື່ອຜັນຂະຫຍາຍ, ອະທິບາຍ ແລະ ແນະນຳເນື້ອໃນບາງມາດຕາ ຂອງ ກົດໝາຍວ່າດ້ວຍການປ້ອງກັນພືດ ທີ່ເຫັນວາ ຈຳເປັນໃຫ້ລະອຽດ, ຈະແຈ້ງ, ມີຄວາມເຂົ້າໃຈຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດ ກົດໝາຍດັ່ງກ່າວ ໃຫ້ຖືກຕ້ອງ, ມີປະສິດທິຜົນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມທີ່ກ່ຽວຂ້ອງ ພ້ອມທັງສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 2. ການປ້ອງກັນພືດ**

ການປ້ອງກັນພືດຕາມຫຼັກວິຊາການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງ ກົດໝາຍວ່າດ້ວຍການປ້ອງກັນພືດ ໝາຍເຖິງ ການນຳໃຊ້ມາດຕະການດ້ານສຸຂານາໄມພືດ ເປັນຕົ້ນ ການກວດກາ, ການ

ກັກກັນພືດ, ການກຳນົດເຂດເປົ້າໝາຍການຄວບຄຸມສັດຕູພືດ ແລະ ມາດຕະການວິຊາການອື່ນ ທີ່ສອດຄ່ອງກັບລະບຽບກົດໝາຍ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງມີຄວາມໝາຍດ້ານວິຊາການ ແລະ ເຕັກນິກກ່ຽວກັບວຽກງານປ້ອງກັນພືດ ດັ່ງນີ້:

1. **ສັດຕູພືດຕ້ອງຫ້າມ** ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ **ສັດຕູພືດຕ້ອງຄວບຄຸມ** ຊຶ່ງປະກອບດ້ວຍ:
   - **ສັດຕູພືດກັກກັນ** ແມ່ນ ສັດຕູພືດທີ່ອາດສົ່ງຜົນກະທົບທາງດ້ານເສດຖະກິດ ແລະ ສ້າງຄວາມເສຍຫາຍຕໍ່ພືດດັ່ງກ່າວ ຊຶ່ງແມ່ນສັດຕູພືດທີ່ຍັງບໍ່ທັນປະກົດມີ ຫຼື ມີແລ້ວແຕ່ຍັງບໍ່ທັນແຜ່ຂະຫຍາຍເປັນວົງກວ້າງ ແລະ ກຳລັງມີການຄວບຄຸມຢ່າງເປັນທາງການ;
   - **ສັດຕູພືດທີ່ບໍ່ກັກກັນ ແຕ່ຕ້ອງຄວບຄຸມ** ແມ່ນ ສັດຕູພືດທີ່ປາກົດມີໃນພືດ ຊຶ່ງອາດມີຜົນກະທົບທາງດ້ານເສດຖະກິດ ທີ່ບໍ່ສາມາດຍອມຮັບໄດ້ ຕໍ່ເປົ້າໝາຍການນຳໃຊ້ພືດດັ່ງກ່າວ.
2. **ການກັກກັນພືດ** ໝາຍເຖິງ ການຈຳກັດບໍລິເວນຂອງພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມຢ່າງເປັນທາງການ ເພື່ອເຝົ້າລະວັງ, ກວດກາ, ທົດສອບ, ຄົ້ນຄວ້າ ຫຼື ບຳບັດໃຫ້ມີຄວາມສະອາດ ແລະ ປອດໄພ ເພີ່ມຕື່ມ.
3. **ການກວດກາ** ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນພືດ ຍົກເວັ້ນໃນພາກທີ VI ໝວດທີ 2 ໝາຍເຖິງ ການກວດກາທາງດ້ານເຕັກນິກ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ໂດຍເຈົ້າໜ້າທີ່ປ້ອງກັນພືດ ເພື່ອກຳນົດວ່າ ມີສັດຕູພືດ ຫຼື ບໍ່ ຫຼື ເພື່ອກຳນົດຄວາມສອດຄ່ອງກັບລະບຽບການດ້ານສຸຂານາໄມພືດ.
4. **ມາດຕະການດ້ານສຸຂານາໄມພືດ** ໝາຍເຖິງ ລະບຽບ, ກົດໝາຍ ຫຼື ຂັ້ນຕອນການປະຕິບັດທີ່ເປັນທາງການ ເພື່ອສະກັດກັ້ນການເຂົ້າມາ ຫຼື ການແຜ່ລະບາດຂອງສັດຕູພືດກັກກັນ ຫຼື ເພື່ອຈຳກັດຜົນກະທົບທາງດ້ານເສດຖະກິດ ທີ່ອາດເກີດຂຶ້ນຈາກສັດຕູພືດທີ່ບໍ່ກັກກັນ ແຕ່ຕ້ອງຄວບຄຸມ ຢູ່ ສປປ ລາວ.
5. **ການປະຕິບັດດ້ານສຸຂານາໄມພືດ** ໝາຍເຖິງ ການດຳເນີນງານທີ່ເປັນທາງການ ເຊັ່ນ: ການກວດກາ, ການທົດສອບ, ການເຝົ້າລະວັງ ຫຼື ການບຳບັດ ເພື່ອຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດ.
6. **ໃບຢັ້ງຢືນສຸຂານາໄມພືດ** ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງໝາຍເຖິງ ໃບຢັ້ງຢືນທີ່ສອດຄ່ອງຕາມແບບຮ່າງຢັ້ງຢືນ ຂອງອົງການປ້ອງກັນພືດສາກົນ.
7. **ລະດັບການປ້ອງກັນສຸຂານາໄມພືດທີ່ເໝາະສົມ** ໝາຍເຖິງ ລະດັບການປ້ອງກັນສຸຂານາໄມພືດ ທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ເຫັນວ່າ ເໝາະສົມກັບ ສປປ ລາວ ໂດຍມີການກຳນົດ ມາດຕະການສຸຂານາໄມພືດ ເພື່ອສະກັດກັ້ນການເຂົ້າມາ ແລະ ແຜ່ລະບາດ ຂອງສັດຕູພືດກັກກັນ, ຫຼື ເພື່ອຈຳກັດຜົນກະທົບທາງດ້ານເສດຖະກິດ ທີ່ອາດເກີດຂຶ້ນຈາກສັດຕູພືດທີ່ບໍ່ກັກກັນ ແຕ່ຕ້ອງຄວບຄຸມ ຢູ່ ສປປ ລາວ.
8. **ເຂດແຜ່ລະບາດຕ່ຳຂອງສັດຕູພືດ** ໝາຍເຖິງ ພື້ນທີ່ທັງໝົດ ຫຼື ສ່ວນໃດໜຶ່ງຂອງປະເທດ ຫຼື ຫຼາຍປະເທດ ທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດກຳນົດວ່າ ໃນພື້ນທີ່ດັ່ງກ່າວມີສັດຕູພືດໃດໜຶ່ງ ເກີດຂຶ້ນໃນລະດັບຕ່ຳ ແລະ ເປັນພື້ນທີ່ ທີ່ມີການນຳໃຊ້ມາດຕະການເຝົ້າລະວັງ, ຄວບຄຸມ ຫຼືກຳຈັດໃຫ້ໝົດໄປຢ່າງມີປະສິດທິພາບ.

9. **ເຂດປອດສັດຕູພືດ** ໝາຍເຖິງ ເຂດທີ່ບໍ່ມີສັດຕູພືດ ໃດໜຶ່ງເກີດຂຶ້ນ ໂດຍມີການສະແດງໃຫ້ເຫັນດ້ວຍຫຼັກຖານທາງວິທະຍາສາດ ແລະ ພື້ນທີ່ດັ່ງກ່າວກໍມີການບົວລະບັດຮັກສາ ຢ່າງເປັນທາງການ ຕາມຄວາມເໝາະສົມ.

10. **ສະຖານທີ່ຜະລິດປອດສັດຕູພືດ** ໝາຍເຖິງ ສະຖານທີ່ທຳການຜະລິດ ທີ່ບໍ່ມີສັດຕູພືດສະເພາະຊະນິດໃດໜຶ່ງເກີດຂຶ້ນ ໂດຍມີການສະແດງໃຫ້ເຫັນດ້ວຍຫຼັກຖານທາງດ້ານວິທະຍາສາດ ແລະ ສະຖານທີ່ດັ່ງກ່າວ ກໍມີການບົວລະບັດຮັກສາສະພາບປອດສັດຕູພືດ ຕາມຄວາມເໝາະສົມ ໃນໄລຍະເວລາທີ່ໄດ້ກຳນົດໄວ້.

11. **ແຫຼ່ງຜະລິດປອດສັດຕູພືດ** ໝາຍເຖິງ ເຂດທີ່ໄດ້ກຳນົດໄວ້ໃດໜຶ່ງໃນສະຖານທີ່ທຳການຜະລິດ ທີ່ບໍ່ມີສັດຕູພືດສະເພາະຊະນິດໃດໜຶ່ງເກີດຂຶ້ນ ໂດຍມີການສະແດງໃຫ້ເຫັນດ້ວຍຫຼັກຖານທາງດ້ານວິທະຍາສາດ ແລະ ສະຖານທີ່ດັ່ງກ່າວ ກໍມີການບົວລະບັດຮັກສາສະພາບປອດສັດຕູພືດ ຕາມຄວາມເໝາະສົມ ໃນໄລຍະເວລາທີ່ໄດ້ກຳນົດໄວ້ ແລະ ມີການແຍກເປັນເຂດສະເພາະ ຄືກັນກັບສະຖານທີ່ຜະລິດປອດສັດຕູພືດ.

12. **ດ່ານເຂົ້າ ຫຼື ອອກ** ໝາຍເຖິງ ດ່ານປ້ອງກັນພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂໍ້ 12 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ ທີ່ໃຊ້ສຳລັບການນຳເຂົ້າ ຫຼື ສົ່ງອອກພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ທີ່ສ້າງຕັ້ງຂຶ້ນໂດຍອົງການຄຸ້ມຄອງວຽກງານປ້ອງກັນພືດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ໂດຍອີງຕາມບັນຊີດ່ານຊາຍແດນ ເຂົ້າ-ອອກ ສປປ ລາວ ລວມທັງສະໜາມບິນສາກົນ, ສະຖານີລົດໄຟ, ສະຖານີລົດຂົນສົ່ງໂດຍສານ ແລະ ທ່າເຮືອ ບົນພື້ນຖານການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

13. **ດ່ານທ້ອງຖິ່ນ** ໝາຍເຖິງ ຈຸດກວດກາທີ່ສ້າງຕັ້ງຂຶ້ນໃນແຂວງ, ນະຄອນ, ເມືອງ, ເທດສະບານ ຫຼື ຕາມພື້ນທີ່ອ້ອມຮອບຂອງເຂດກັກກັນສັດຕູພືດ ຫຼື ເຂດກັນຊົນ.

14. **ເຂດກັນຊົນ** ໝາຍເຖິງ ພື້ນທີ່ອ້ອມຮອບ ຫຼື ຕິດຈອດກັບພື້ນທີ່ ທີ່ມີການຈຳກັດຢ່າງເປັນທາງການເພື່ອຈຸດປະສົງດ້ານສຸຂານາໄມພືດ ແນໃສ່ຫຼຸດຜ່ອນຄວາມເປັນໄປໄດ້ຂອງການແຜ່ລະບາດຂອງສັດຕູພືດເປົ້າໝາຍ ເຂົ້າໄປໃນ ຫຼື ອອກຈາກພື້ນທີ່ຈຳກັດດັ່ງກ່າວ ແລະ ຕ້ອງນຳໃຊ້ມາດຕະການສຸຂານາໄມພືດ ແລະ ມາດຕະການຄວບຄຸມອື່ນ ຕາມແຕ່ລະກໍລະນີທີ່ເໝາະສົມ.

15. **ເຂດອັນຕະລາຍ** ໝາຍເຖິງ ເຂດທີ່ມີປັດໄຈຂອງສະພາບແວດລ້ອມເອື້ອອຳນວຍ ໃຫ້ແກ່ການເກີດສັດຕູພືດໃດໜຶ່ງ ຊຶ່ງສັດຕູພືດດັ່ງກ່າວສ້າງຄວາມເສັຍຫາຍ ທາງດ້ານເສດຖະກິດຢ່າງຫຼວງຫຼາຍ ແກ່ ສປປ ລາວ.

16. **ເຂດກັກກັນ** ໝາຍເຖິງ ເຂດທີ່ມີສັດຕູພືດກັກກັນ ແລະ ຢູ່ໃນການຄວບຄຸມຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ;

17. **ການແຜ່ລະບາດ** ໝາຍເຖິງ ການແຜ່ຂະຫຍາຍ ຂອງສັດຕູພືດທີ່ຫາກໍກວດພົບ, ລວມເຖິງການຍ້າຍຖິ່ນຖານ ແລະ ການເພີ່ມຂຶ້ນຢ່າງໄວວາ ຂອງປະຊາກອນສັດຕູພືດ ໃນເຂດໃດໜຶ່ງ;

18. **ວັດຖຸຕ້ອງຄວບຄຸມ** ໝາຍເຖິງ ພືດ, ຜະລິດຕະພັນພືດ, ສະຖານທີ່ເກັບມ້ຽນ, ສິ່ງບັນຈຸ, ສິ່ງຫຸ້ມຫໍ່, ຕູ້ບັນຈຸ, ດິນ, ສິ່ງທີ່ມີຊີວິດ, ວັດຖຸ ແລະ ວັດສະດຸອື່ນ ທີ່ສາມາດນຳພາ ຫຼື ແຜ່ກະຈາຍສັດຕູພືດ ຊຶ່ງຈຳເປັນຕ້ອງນຳໃຊ້ມາດຕະການສຸຂານາໄມພືດ;

19. **ສຸຂານາໄມພືດ** ຕາມທີ່ກຳນົດໄວ້ໃນ ມາດຕາ 3 ຂໍ້ 15 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງໝາຍເຖິງ ການບຳບັດທີ່ເປັນຂັ້ນຕອນການປະຕິບັດ ດ້ວຍການອົບອາຍຮ້ອນ, ອາຍເຢັນ, ແຊ່ແຂງ, ອົບແຫ້ງ, ຣົມສານເຄມີ, ການສາຍແສງລັງສີ ແລະ ວິທີອື່ນ ເພື່ອທຳລາຍ, ຢັບຢັ້ງ ຫຼື ກຳຈັດສັດຕູພືດ ເພື່ອບໍ່ໃຫ້ສັດຕູພືດແຜ່ຂະຫຍາຍ ຫຼື ເຮັດໃຫ້ອ່ອນແອ.

20. **ຊຸດສິນຄ້າ** ໝາຍເຖິງ ປະລິມານໜຶ່ງຂອງພືດ, ຜະລິດຕະພັນພືດ ຫຼື ວັດຖຸອື່ນ ທີ່ເຄື່ອນຍ້າຍຈາກປະເທດໜຶ່ງ ໄປອີກປະເທດໜຶ່ງ ຕາມຈຳນວນທີ່ໄດ້ກຳນົດໄວ້ ໃນໃບຢັ້ງຢືນສຸຂານາໄມພືດສະບັບດຽວ ແລະ ຊຸດສິນຄ້າໜຶ່ງ ອາດມີສິນຄ້າໜຶ່ງ ຫຼື ຫຼາຍປະເພດ.

21. **ການວິໄຈຄວາມສ່ຽງສັດຕູພືດ** ໝາຍເຖິງ ຂະບວນການປະເມີນຄວາມສ່ຽງຂອງສັດຕູພືດ ຈາກຫຼັກຖານ, ຂໍ້ມູນທາງດ້ານຊີວະວິທະຍາ, ວິທະຍາສາດ ແລະ ເສດຖະກິດ ເພື່ອກຳນົດສັດຕູພືດ ຄວບຄຸມ ແລະ ລະດັບຄວາມເຂັ້ມງວດຂອງມາດຕະການສຸຂານາໄມພືດ ທີ່ຕ້ອງປະຕິບັດຕໍ່ສັດຕູພືດດັ່ງກ່າວ.

22. **ອົງການຄຸ້ມຄອງວຽກງານປ້ອງກັນພືດ** ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງໝາຍເຖິງ ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງແມ່ນອົງການຄຸ້ມຄອງວຽກງານປ້ອງກັນພືດ ຂັ້ນສູນກາງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ ແລະ ດ່ານປ້ອງກັນພືດ ຊຶ່ງແມ່ນອົງການຄຸ້ມຄອງວຽກງານປ້ອງກັນພືດ ຂັ້ນທ້ອງຖິ່ນ ທີ່ສ້າງຕັ້ງຂຶ້ນໂດຍ ກະຊວງ ກະສິກຳ ແລະ ປ່າໄມ້ ເພື່ອປະຕິບັດໜ້າທີ່ເປັນອົງການປ້ອງກັນພືດແຫ່ງຊາດ ຕາມທີ່ກຳນົດໄວ້ໃນສົນທິສັນຍາປ້ອງກັນພືດສາກົນ.

23. **ການຄວບຄຸມສັດຕູພືດ** ໝາຍເຖິງ ການຢັບຢັ້ງ, ການຈຳກັດຂອບເຂດ ຫຼື ກຳຈັດປະຊາກອນຂອງສັດຕູພືດໃຫ້ໝົດໄປ.

24. **ຜະລິດຕະພັນພືດ** ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂໍ້ 4 ຂອງກົດໝາຍ ວ່າດ້ວຍການປ້ອງກັນພືດນັ້ນ ຍັງໝາຍເຖິງພືດທີ່ຍັງບໍ່ໄດ້ຜ່ານ ແລະ ໄດ້ຜ່ານຂະບວນການປຸງແຕ່ງ ໂດຍທຳມະຊາດ ຫຼື ການປຸງແຕ່ງຂອງພືດດັ່ງກ່າວ ອາດສ້າງຄວາມສ່ຽງຕໍ່ການເຂົ້າມາ ແລະ ແຜ່ກະຈາຍຂອງສັດຕູພືດ.

**ມາດຕາ 4. ຫຼັກການໃນການກຳນົດມາດຕະການ ການປ້ອງກັນ**

ການກຳນົດມາດຕະການ ການປ້ອງກັນ ບົນພື້ນຖານຫຼັກການກ່ຽວກັບການປ້ອງກັນພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂໍ້ 5 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຕ້ອງປະຕິບັດ ດັ່ງນີ້:

1. ອີງໃສ່ມາດຕະຖານສາກົນ, ບົດແນະນຳ ແລະ ຄູ່ມືສຳລັບການປະຕິບັດ;
2. ນຳໃຊ້ໃນກໍລະນີ ທີ່ຈຳເປັນສະເພາະປ້ອງກັນສຸຂານາໄມພືດ;
3. ອີງໃສ່ພື້ນຖານການປະເມີນ ແລະ ວິໄຈຄວາມສ່ຽງຂອງສັດຕູພືດ ແລະ ມີຄວາມສົມສ່ວນ ກັບຄວາມສ່ຽງດັ່ງກ່າວ;
4. ບໍ່ເຂັ້ມງວດເກີນຄວາມຈຳເປັນ ແລະ ບໍ່ສ້າງສິ່ງກີດຂວາງທີ່ບໍ່ຈຳເປັນຕໍ່ການຄ້າ;
5. ບໍ່ຈຳແນກປະຕິບັດ ລະຫວ່າງຜະລິດຕະພັນ ຫຼື ຜູ້ຜະລິດພາຍໃນ ແລະ ຕ່າງປະເທດ ລວມທັງ ລະຫວ່າງປະເທດ ໃນສະພາບເງື່ອນໄຂອັນດຽວກັນ ຫຼື ຄືກັນ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕ້ອງຮັບຮູ້ມາດຕະການສຸຂານາໄມພືດຂອງປະເທດສົ່ງອອກທີ່ເທົ່າທຽມກັນ ໃນກໍລະນີທີ່ປະເທດສົ່ງອອກ ສະແດງໃຫ້ເຫັນວ່າ ການນຳໃຊ້ມາດຕະການດັ່ງກ່າວ ມີຜົນໄດ້ຮັບ ເທົ່າທຽມກັບມາດຕະການທີ່ປະຕິບັດ ຫຼື ສາມາດບັນລຸລະດັບການປ້ອງກັນສຸຂານາໄມພືດ ທີ່ເໝາະສົມ ຂອງ ສປປ ລາວ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕ້ອງຮັບຮູ້ມາດຕະການສຸຂານາໄມພືດຂອງຕ່າງປະເທດ ຊຶ່ງມາດຕະການສຸຂານາໄມພືດດັ່ງກ່າວ ສາມາດບັນລຸລະດັບການປ້ອງກັນຄວາມສ່ຽງ ທີ່ ສປປ ລາວ ກຳນົດ.

### ມາດຕາ 5. ການຮ່ວມມືສາກົນ

ການຮ່ວມມືສາກົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ ນັ້ນ ແມ່ນການຮ່ວມມືສາກົນ ທີ່ສອດຄ່ອງກັບສົນທິສັນຍາປ້ອງກັນພືດສາກົນ ດັ່ງນີ້:

1. ຮ່ວມມືໃນການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບສັດຕູພືດ ເປັນຕົ້ນ ການລາຍງານສະພາບການເກີດຂຶ້ນ, ການແຜ່ກະຈາຍ ຫຼື ການແຜ່ລະບາດຂອງສັດຕູພືດທີ່ເປັນ ຫຼື ອາດເປັນອັນຕະລາຍ ໂດຍກົງ ຫຼື ທັນທີ ໂດຍສອດຄ່ອງກັບຂັ້ນຕອນການປະຕິບັດ ທີ່ກຳນົດໂດຍຄະນະກຳມາທິການສົນທິສັນຍາປ້ອງກັນພືດສາກົນ;
2. ຮ່ວມມືກັບຕ່າງປະເທດ ເທົ່າທີ່ສາມາດປະຕິບັດໄດ້ ເພື່ອສະໜອງຂໍ້ມູນດ້ານເຕັກນິກ ແລະ ຊີວະວິທະຍາທີ່ຈຳເປັນ ໃນການວິໄຈຄວາມສ່ຽງສັດຕູພືດ;
3. ເຂົ້າຮ່ວມໃນຂະບວນການ ເທົ່າທີ່ສາມາດປະຕິບັດໄດ້ ເພື່ອສະກັດກັ້ນສັດຕູພືດ ທີ່ສ້າງຄວາມເສັຍຫາຍຮ້າຍແຮງຕໍ່ການຜະລິດພືດ ແລະ ຕ້ອງປະຕິບັດຕາມຫຼັກການຂອງສາກົນ ເພື່ອຕອບສະໜອງຕາມສະພາບການຮີບດ່ວນ;
4. ເປັນຈຸດປະສານງານໃນການຈັດຕັ້ງປະຕິບັດ ຕາມທີ່ໄດ້ກຳນົດໄວ້ຂ້າງເທິງນັ້ນ.

## ໝວດທີ 2
## ການຄວບຄຸມສັດຕູພືດ

### ມາດຕາ 6. ການຄວບຄຸມສັດຕູພືດ

ການຄວບຄຸມສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນພາກທີ II ໝວດທີ 1 ຂອງກົດໝາຍວ່າດ້ວຍ ການປ້ອງກັນພືດນັ້ນ ຍັງໝາຍເຖິງ ການສ້າງບັນຊີສັດຕູພືດຄວບຄຸມ, ການປະກາດເຂດກັກກັນ, ການຍົກເລີກປະກາດເຂດກັກກັນ, ການນຳໃຊ້ມາດຕະການຄວບຄຸມໃນເຂດກັກກັນ ແລະ ເຂດກັນຊົນ, ການນຳໃຊ້ມາດຕະການດ້ານສຸຂານາໄມພືດ, ການເຝົ້າລະວັງ, ການສ້າງລະບົບຄຸ້ມຄອງພື້ນທີ່ ແລະ ສະຖານທີ່ຜະລິດທີ່ປອດສັດຕູພືດ ແລະ ການກຳນົດສະຖານີກັກກັນ.

### ມາດຕາ 7. ການປະກາດບັນຊີສັດຕູພືດຕ້ອງຫ້າມ

ການປະກາດໃຊ້ບັນຊີສັດຕູພືດຕ້ອງຫ້າມ ຕາມທີ່ກຳນົດໄວ້ໃນມາດຕາ 43 ຂໍ້ 9 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ແມ່ນອົງການຄຸ້ມຄອງວຽກງານປ້ອງກັນພືດ ເປັນຜູ້ສ້າງ, ຮັບຮອງ ແລະ ປະກາດນຳໃຊ້ບັນຊີສັດຕູພືດຕ້ອງຫ້າມ ບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ ຊຶ່ງຕ້ອງປັບປຸງບັນຊີດັ່ງກ່າວເປັນແຕ່ລະໄລຍະ ບົນພື້ນຖານການວິໄຈ ຄວາມສ່ຽງຂອງສັດຕູພືດ ແລະ ກໍຕ້ອງແຈ້ງບັນຊີ ແລະ ການປ່ຽນແປງບັນຊີດັ່ງກ່າວ ໃຫ້ຄະນະກຳມະທິການສົນທິສັນຍາປ້ອງກັນພືດສາກົນ ແລະ ພາກພື້ນ ລວມທັງປະເທດຄູ່ຄ້າອື່ນຕາມການຮ້ອງຂໍ.

### ມາດຕາ 8. ການປະກາດເຂດກັກກັນ

ການປະກາດເຂດສັດຕູພືດລະບາດ ທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງໝາຍເຖິງ ການປະກາດເຂດກັກກັນ ໃນກໍລະນີອົງການຄຸ້ມຄອງວຽກງານປ້ອງກັນພືດ ສົງໄສ ຫຼື ມີຫຼັກຖານ ເພື່ອກຳນົດສັດຕູພືດຄວບຄຸມໃດໜຶ່ງ ທີ່ປາກົດຂຶ້ນໃນພື້ນທີ່ໃດໜຶ່ງ ພາຍຫຼັງການສຳຫຼວດ ແລະ ໄດ້ຮັບລາຍງານ ຈາກເຈົ້າໜ້າທີ່ປ້ອງກັນພືດທີ່ຖືກແຕ່ງຕັ້ງ ໃຫ້ເຂົ້າໄປໃນພື້ນທີ່ ຫຼື ສະຖານທີ່ດັ່ງກ່າວ ເພື່ອກວດກາວັດຖຸຄວບຄຸມ, ເກັບຕົວຢ່າງ ແລະ ລາຍງານຜົນໄດ້ຮັບຕໍ່ອົງການຄຸ້ມຄອງວຽກງານປ້ອງກັນພືດ.

ໃນກໍລະນີມີສັດຕູພືດລະບາດ ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕ້ອງສະເໜີໃຫ້ອົງການປົກຄອງແຕ່ລະຂັ້ນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍປ້ອງກັນພືດ ປະຕິບັດ ດັ່ງນີ້:

1. ປະກາດເຂດກັກກັນພືດຊົ່ວຄາວ ໃນກໍລະນີມີຄວາມຈຳເປັນ ເພື່ອວິໄຈທາງດ້ານວິທະຍາສາດ ໃນການກຳນົດສະພາບການລະບາດຂອງສັດຕູພືດ ທີ່ພົບເຫັນໃນພື້ນທີ່ດັ່ງກ່າວ;
2. ປະກາດເຂດດັ່ງກ່າວເປັນເຂດກັກກັນ ເພື່ອດຳເນີນມາດຕະການສຸຂານາໄມພືດທີ່ຈຳເປັນ ສຳລັບການຄວບຄຸມສັດຕູພືດ ຫຼື ປະກາດລົບລ້າງເຂດກັກກັນພືດຊົ່ວຄາວດັ່ງກ່າວ ພາຍຫຼັງທີ່ໄດ້ປະກາດເຂດກັກກັນຊົ່ວຄາວ ພາຍໃນກຳນົດເວລາ ສາມສິບວັນ ບົນພື້ນຖານການຢັ້ງຢືນທາງດ້ານວິທະຍາສາດ ແລະ ການເຝົ້າລະວັງ;

ໃນກໍລະນີທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ຢັ້ງຢືນທາງດ້ານວິຊາການວ່າ ມີສັດຕູພືດດັ່ງກ່າວ ເກີດຂຶ້ນ ຕາມທີ່ໄດ້ກຳນົດໄວ້ມາດຕານີ້ ໃຫ້ອົງການປົກຄອງທ້ອງຖິ່ນ ອອກແຈ້ງການກ່ຽວກັບມາດຕະການສຸຂານາໄມພືດທີ່ຕ້ອງປະຕິບັດ ສຳລັບເຂດກັກກັນພືດ ພາຍຫຼັງທີ່ໄດ້ຮັບການສະເໜີ ແລະ ການຢັ້ງຢືນທາງດ້ານວິຊາການ ຈາກອົງການຄຸ້ມຄອງວຽກງານປ້ອງກັນພືດ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ທີ່ກ່ຽວຂ້ອງ ຕ້ອງພິມເຜີຍແຜ່ການປະກາດເປັນເຂດກັກກັນ ພ້ອມທັງ ກຳນົດໄລຍະເວລາ ຂອງການກັກກັນ ແລະ ເງື່ອນໄຂສຳລັບການຕໍ່ເວລາຂອງການປະກາດນັ້ນ.

### ມາດຕາ 9. ການຍົກເລີກການປະກາດເຂດກັກກັນ

ພາຍຫຼັງການປະກາດເຂດສັດຕູພືດລະບາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ12 ຂອງກົດໝາຍວ່າດ້ວຍການປ້ອງກັນພືດແລ້ວ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ປະເມີນກ່ຽວກັບສະຖານະພາບຂອງເຂດກັກກັນ ຢ່າງເປັນປົກກະຕິ ໃນກໍລະນີທີ່ສັດຕູພືດຄວບຄຸມຫາກໝົດໄປ ຫຼື ຄວາມສ່ຽງຂອງສັດຕູພືດຢູ່ໃນລະດັບຕໍ່າ ຊຶ່ງບໍ່ຈຳເປັນຕ້ອງຄວບຄຸມ ບົນພື້ນຖານການຢັ້ງຢືນທາງດ້ານວິທະຍາສາດ ແລະ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ປະສານກັບອົງການທີ່ກ່ຽວຂ້ອງ ຍົກເລີກການປະກາດດັ່ງກ່າວ ລວມທັງ ມາດຕະການຄວບຄຸມໃນເຂດກັກກັນ ແລະ ເຂດກັນຊົນນັ້ນ.

### ມາດຕາ 10. ມາດຕະການຄວບຄຸມໃນເຂດກັກກັນ ແລະ ເຂດກັນຊົນ

ການຄວບຄຸມພືດພາຍໃນປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ແລະ ການນຳໃຊ້ມາດຕະການຄວບຄຸມ ການແຜ່ລະບາດຂອງສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍ ການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ກຳນົດມາດຕະການດ້ານສຸຂານາໄມພືດສຳລັບເຂດກັກກັນ ແລະ ເຂດກັນຊົນ ແລະ ແຕ່ລະປະເພດສັດຕູພືດຄວບຄຸມ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ເປັນຜູ້ແຕ່ງຕັ້ງໜ່ວຍສະເພາະກິດ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ຂອງເຂດກັກກັນ ຊຶ່ງໜ່ວຍງານດັ່ງກ່າວ ຕ້ອງກຳນົດຂອບເຂດທາງພູມສາດຂອງເຂດກັກກັນ ແລະ ເຂດກັນຊົນຢ່າງລະອຽດຈະແຈ້ງ.

ການປະຕິບັດມາດຕະການດ້ານສຸຂະນາໄມພືດໃນເຂດກັກກັນນັ້ນ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດປະຕິບັດ ດັ່ງນີ້:

1. ເຝົ້າລະວັງຢ່າງຕໍ່ເນື່ອງ ນັບແຕ່ວັນອອກປະກາດຈົນເຖິງວັນຍົກເລີກເຂດກັກກັນ, ເກັບຕົວຢ່າງ ແລະ ທົດສອບຕາມຫຼັກວິຊາການເພື່ອປະເມີນສະພາບການຂອງສັດຕູພືດໃນເຂດດັ່ງກ່າວ;
2. ປະກາດຫ້າມ ຫຼື ຈຳກັດການເຄື່ອນຍ້າຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ໃນກໍລະນີມີການຢັ້ງຢືນ ແລະ ພິສູດທາງດ້ານວິທະຍາສາດວ່າ ມີສັດຕູພືດຄວບຄຸມ.

ສຳລັບການປະຕິບັດມາດຕະການດ້ານສຸຂານາໄມພືດໃນເຂດກັກກັນ ຂອງໜ່ວຍສະເພາະກິດນັ້ນ ໃຫ້ປະຕິບັດ ດັ່ງນີ້:

1. ເຜີຍແຜ່, ຈັດຕັ້ງປະຕິບັດ ແລະ ກຳນົດມາດຕະການສຸຂານາໄມພືດສະເພາະ ຫຼື ເພີ່ມຕື່ມ ພ້ອມທັງປະເມີນຄືນເປັນແຕ່ລະໄລຍະ ເພື່ອຮັບປະກັນໃຫ້ເໝາະສົມກັບສະພາບຄວາມເປັນຈິງ;
2. ກຳນົດດ່ານທ້ອງຖິ່ນ ເພື່ອຕິດຕາມ ແລະ ຄວບຄຸມການເຄື່ອນຍ້າຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ເຂົ້າ-ອອກ ເຂດດັ່ງກ່າວ ພ້ອມທັງປະຕິບັດມາດຕະການສຸຂານາໄມພືດ ໃນດ່ານທ້ອງຖິ່ນເຫຼົ່ານັ້ນ.

ສຳລັບເຂດກັນຊົນ ກໍຕ້ອງນຳໃຊ້ມາດຕະການດຽວກັນ ກັບທີ່ໃຊ້ໃນເຂດກັກກັນ ໂດຍບໍ່ຈຳເປັນຕ້ອງສ້າງຕັ້ງດ່ານທ້ອງຖິ່ນ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງໃຫ້ຄຳແນະນຳແກ່ເຈົ້າຂອງສະຖານທີ່ ຫຼື ຕົວແທນຜູ້ທີ່ຮັບຜິດຊອບສະຖານທີ່ຜະລິດພືດ ຫຼື ບັນຈຸພືດ ຫຼື ຜະລິດຕະພັນພືດທີ່ຢູ່ພາຍໃນເຂດກັກກັນ ແລະ ເຂດກັນຊົນ. ເຈົ້າໜ້າທີ່ປ້ອງກັນພືດ ຕ້ອງເກັບຕົວຢ່າງ ແລະ ດຳເນີນການທົດສອບຕາມທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື.

ມາດຕະການສຸຂານາໄມພືດ ທີ່ຈະນຳໃຊ້ໃນເຂດກັກກັນ ແລະ ເຂດກັນຊົນ ຕ້ອງມີການເຜີຍແຜ່ທາງວິທະຍຸ, ໜັງສືພິມ ແລະ ສື່ອື່ນທີ່ເໝາະສົມ ແລະ ທັນການ. ພ້ອມກັນນັ້ນ ອົງການປົກຄອງທ້ອງຖິ່ນກໍຕ້ອງສະໜອງຂໍ້ມູນທີ່ມີ ກ່ຽວກັບມາດຕະການທີ່ນຳໃຊ້ໃນພາກສະໜາມ.

**ມາດຕາ 11. ມາດຕະການດ້ານສຸຂານາໄມພືດ**

ມາດຕະການຄວບຄຸມການ ແຜ່ລະບາດຂອງສັດຕູພືດ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ການນຳໃຊ້ມາດຕະການດ້ານສຸຂານາໄມພືດ ໃນກໍລະນີສົງໄສວ່າ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຕິດແປດສັດຕູພືດຕ້ອງຄວບຄຸມ ຊຶ່ງສາມາດນຳໃຊ້ ໜຶ່ງ ຫຼື ຫຼາຍມາດຕະການດ້ານສຸຂານາໄມພືດ ບົນພື້ນຖານການວິໄຈຄວາມສ່ຽງຂອງສັດຕູພືດ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການບຳບັດ, ການທຳລາຍ ຫຼື ການກຳຈັດພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ, ລວມທັງການບຳບັດພາຫະນະ ທີ່ອາດຕິດ ຫຼື ບໍ່ຕິດແປດສັດຕູພືດ ເພື່ອຈຳກັດການແຜ່ກະຈາຍຂອງສັດຕູພືດກັກກັນ;

2. ການຄວບຄຸມສັດຕູພືດ ໂດຍປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ;
3. ການຫ້າມ ຫຼື ການກຳຈັດການເຄື່ອນຍ້າຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ຢູ່ພາຍໃນ ແລະ ເຂົ້າ ຫຼື ອອກ ເຂດກັກກັນ ຫຼື ເຂດກັນຊົນ;
4. ການກຳນົດໃຫ້ເຈົ້າຂອງພື້ນທີ່ທຳການຜະລິດ ປະຕິບັດມາດຕະການດ້ານສຸຂານາໄມພືດໃນພື້ນທີ່ຂອງຕົນ;
5. ການຫ້າມປູກພືດໃດໜຶ່ງ ຫຼື ປູກພືດດັ່ງກ່າວຊ້ຳຄືນໃນເຂດທີ່ກຳນົດໄວ້ສະເພາະ;
6. ກຳນົດມາດຕະການດ້ານສຸຂານາໄມພືດອື່ນ ໃນກໍລະນີທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດເຫັນວ່າ ມີຄວາມຈຳເປັນ.

ຖ້າເຈົ້າຂອງພື້ນທີ່ການຜະລິດ ບໍ່ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 4 ຂອງມາດຕານີ້ ໃຫ້ອົງການ ຄຸ້ມຄອງວຽກງານປ້ອງກັນພືດ ແຕ່ງຕັ້ງເຈົ້າໜ້າທີ່ປ້ອງກັນພືດ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເຂົ້າໄປໃນເຂດດັ່ງກ່າວ ເພື່ອຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດທີ່ຈຳເປັນ ເພື່ອຢຸດຕິ ຫຼື ຈຳກັດການແຜ່ລະບາດຂອງສັດຕູພືດ, ທຳລາຍ ຫຼື ກຳຈັດພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຊຶ່ງເຈົ້າຂອງພື້ນທີ່ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດການ ທີ່ກ່າວມາຂ້າງເທິງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ກໍລະນີມີຄວາມເສັຍຫາຍ ທີ່ເກີດຈາກການທຳລາຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ທີ່ເນື່ອງມາຈາກການຈັດຕັ້ງປະຕິບັດສຸຂານາໄມພືດນັ້ນ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດລາຍງານ ແລະ ນຳສະເໜີ ຕໍ່ລັດຖະບານ ເພື່ອພິຈາລະນາ ຕາມຄວາມເໝາະສົມ.

## ມາດຕາ 12. ການເຝົ້າລະວັງ

ການຕິດຕາມ ແລະ ກວດກາ ພື້ນທີ່ທຳການຜະລິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂໍ້ 4 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ສ້າງລະບົບທີ່ເໝາະສົມເທື່ອລະກ້າວ ເພື່ອຕິດຕາມ, ເຝົ້າລະວັງສັດຕູພືດຕ້ອງຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນບັນຊີສັດຕູພືດດັ່ງກ່າວ ບົນພື້ນຖານດ້ານຊັບພະຍາກອນ ແລະ ຄວາມສາມາດຕົວຈິງ.

## ມາດຕາ 13. ແຫຼ່ງຜະລິດປອດສັດຕູພືດ, ສະຖານທີ່ຜະລິດປອດສັດຕູພືດ , ເຂດແຜ່ລະບາດຕ່ຳຂອງສັດຕູພືດ ແລະ ເຂດປອດສັດຕູພືດ

ການນຳໃຊ້ວິທີການ ທີ່ເໝາະສົມ ແລະ ມີປະສິດທິຜົນ ໃນການຄວບຄຸມສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ສ້າງລະບົບຄຸ້ມຄອງແຫຼ່ງຜະລິດ ແລະ ສະຖານທີ່ຜະລິດ ທີ່ປອດສັດຕູພືດ ໃນ ສປປ ລາວ ເທື່ອລະກ້າວ ບົນພື້ນຖານດ້ານຊັບພະຍາກອນ, ຄວາມສາມາດຕົວຈິງ ແລະ ເງື່ອນໄຂກ່ຽວກັບ ຄວາມຮັບຜິດຊອບ ຂອງເຈົ້າຂອງແຫຼ່ງຜະລິດ ຫຼື ສະຖານທີ່ຜະລິດດັ່ງກ່າວ.

ໃນກໍລະນີທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ຢັ້ງຢືນວ່າ ບໍ່ມີສັດຕູພືດສະເພາະ ປາກົດຂຶ້ນໃນເຂດໃດໜຶ່ງ ໂດຍຜ່ານການເຝົ້າລະວັງ ແລະ ໄດ້ຮັບຮອງເອົາການຈັດຕັ້ງປະຕິບັດມາດຕະການດ້ານສຸຂານາໄມພືດ ເພື່ອຮັກສາເຂດປອດສັດຕູພືດ ພ້ອມທັງໄດ້ສ້າງຕັ້ງລະບົບການຕິດຕາມ ເພື່ອພິສູດວ່າ

ສະພາບປອດສັດຕູພືດນັ້ນ ຍັງໄດ້ຮັບຮັກສາໄວ້ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ປະກາດເປັນເຂດປອດສັດຕູພືດ.

ໃນກໍລະນີທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ຢັ້ງຢືນວ່າ ສັດຕູພືດຄວບຄຸມ ເກີດຂຶ້ນໃນລະດັບຕໍ່າໂດຍຜ່ານການເຝົ້າລະວັງ ແລະ ໄດ້ຮັບຮອງເອົາການຈັດຕັ້ງປະຕິບັດມາດຕະການດ້ານສຸຂານາໄມພືດ ເພື່ອຮັກສາລະດັບປະຊາກອນຂອງສັດຕູພືດ ໃຫ້ຢູ່ໃນລະດັບຕໍ່າ ພ້ອມທັງໄດ້ສ້າງຕັ້ງລະບົບການຕິດຕາມ ເພື່ອພິສູດວ່າ ລະດັບປະຊາກອນຂອງສັດຕູພືດ ຍັງຖືກຮັກສາໄວ້ໃນລະດັບຕໍ່າ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ປະກາດເປັນເຂດແຜ່ລະບາດຕໍ່າຂອງສັດຕູພືດ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕ້ອງສ້າງເຂດແຜ່ລະບາດຕໍ່າຂອງສັດຕູພືດ ແລະ ເຂດປອດສັດຕູພືດ ໃນ ສປປ ລາວ ເທື່ອລະກ້າວ ບົນພື້ນຖານດ້ານຊັບພະຍາກອນ ແລະ ຄວາມສາມາດຕົວຈິງຂອງຕົນ ທີ່ມີຢູ່.

### ມາດຕາ 14. ການລາຍງານກ່ຽວກັບສັດຕູພືດຄວບຄຸມ

ການລາຍງານກ່ຽວກັບສັດຕູພືດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ແລະ ການແຈ້ງ ແລະ ການລາຍງານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 36 ຂໍ້ 6 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ເຈົ້າຂອງ ຫຼື ຕົວແທນທີ່ຮັບຜິດຊອບສະຖານທີ່ປູກ ຫຼື ເກັບມ້ຽນພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ແຈ້ງໃຫ້ເຈົ້າໜ້າທີ່ປ້ອງກັນພືດ ຫຼື ອົງການ ປົກຄອງທ້ອງຖິ່ນບ່ອນທີ່ໃກ້ທີ່ສຸດ ຊາບ ທັນທີໃນກໍລະນີທີ່ສົງໄສ ຫຼື ເກີດມີສັດຕູພືດຄວບຄຸມ ໃນສະຖານທີ່ ທີ່ຕົນເປັນເຈົ້າຂອງ ຫຼື ຮັບຜິດຊອບ ແລະອົງການປົກຄອງທ້ອງຖິ່ນທີ່ຮັບແຈ້ງ ຫລື ລາຍງານ ກໍຕ້ອງລາຍງານຂໍ້ມູນດັ່ງກ່າວ ໃຫ້ແກ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ຊາບພາຍໃນ ຊາວສີ່ ຊົ່ວໂມງ.

### ມາດຕາ 15. ສິດ ແລະ ໜ້າທີ່ ຂອງເຈົ້າຂອງສະຖານທີ່

ສິດ ແລະ ພັນທະຂອງຜູ້ປະກອບການ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 36 ຂໍ້ 2 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ຜູ້ປະກອບການ ທີ່ເປັນເຈົ້າຂອງ ຫຼື ຕົວແທນທີ່ຮັບຜິດຊອບສະຖານທີ່ປູກ ຫຼື ເກັບມ້ຽນພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ໃຫ້ການຮ່ວມມື ແລະ ອະນຸຍາດໃຫ້ເຈົ້າໜ້າທີ່ປ້ອງກັນພືດ ໄດ້ເຂົ້າເຖິງສະຖານທີ່ ດັ່ງກ່າວ ໃນລະຫວ່າງການກວດກາ ລວມທັງ ການເຂົ້າເຖິງເອກະສານທີ່ກ່ຽວຂ້ອງ ແລະ ຍັງຕ້ອງປະຕິບັດໃຫ້ສອດຄ່ອງກັບຄໍາແນະນໍາ ແລະ ການຮ້ອງຂໍ ຂອງເຈົ້າໜ້າທີ່ປ້ອງກັນພືດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການປ້ອງກັນພືດ.

ເຈົ້າຂອງ ຫຼື ຕົວແທນຜູ້ທີ່ຮັບຜິດຊອບສະຖານທີ່ປູກ ຫຼື ເກັບມ້ຽນພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ມີສິດຕິດຕາມເຈົ້າໜ້າທີ່ປ້ອງກັນພືດ ໃນເວລາທີ່ມີການກວດກາ ແລະ ມີສິດຮັບຮູ້ຜົນ ຂອງການກວດກາ ລວມທັງຂັ້ນຕອນຂອງການກວດກາ.

### ມາດຕາ 16. ສະຖານີກັກກັນພືດ

ການແຍກປ່ຽວພືດ ໂດຍການນໍາໄປໄວ້ໃນສະຖານທີ່ສະເພາະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາມາດຕາ 17 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ກໍານົດສະຖານທີ່ໃດໜຶ່ງ ເປັນສະຖານີກັກກັນທີ່ສາມາດເກັບຮັກສາພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ເພື່ອຕິດຕາມ, ກວດກາ, ຄົ້ນຄວ້າ, ທົດສອບ, ບໍາບັດ, ກັກໄວ້ ຫຼື ທໍາລາຍ.

# ໝວດທີ 3
# ການນຳເຂົ້າ

**ມາດຕາ 17. ພື້ນຖານ ສຳລັບການກຳນົດເງື່ອນໄຂການນຳເຂົ້າພືດ**

ການນຳເຂົ້າພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ແມ່ນໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ເປັນຜູ້ກຳນົດເງື່ອນໄຂປະຕິບັດດ້ານສຸຂານາໄມພືດທີ່ຕິດພັນກັບການນຳເຂົ້າ ບົນພື້ນຖານການວິໄຈຄວາມສ່ຽງຂອງສັດຕູພືດ ຫຼື ມາດຕະຖານສາກົນທີ່ມີຢູ່ ເພື່ອສະກັດກັ້ນການແຜ່ລະບາດຂອງສັດຕູພືດກັກກັນ ແລະ ຈຳກັດການເຂົ້າມາຂອງສັດຕູພືດຄວບຄຸມ ຊຶ່ງຕ້ອງປະຕິບັດ ດັ່ງນີ້:

1. ເຜີຍແຜ່ມາດຕະການ ແລະ ເງື່ອນໄຂທີ່ກ່ຽວຂ້ອງໃຫ້ສາທາລະນະຊົນ ຊາບ;
2. ທົບທວນລະບຽບການດັ່ງກ່າວເປັນແຕ່ລະໄລຍະ, ປັບປຸງ ຫຼື ຍົກເລີກທັນທີ ໃນກໍລະນີທີ່ມີການປ່ຽນແປງເງື່ອນໄຂ ຫຼື ມີປັດໄຈໃໝ່ເກີດຂຶ້ນ;
3. ເຂົ້າຮ່ວມການເຈລະຈາສອງຝ່າຍ ຫຼື ຫຼາຍຝ່າຍ ເພື່ອປະເມີນ ແລະ ຍອມຮັບມາດຕະການດ້ານສຸຂານາໄມພືດ ທີ່ແຕກຕ່າງຂອງປະເທດທີ່ສົ່ງອອກ ຊຶ່ງມີຜົນເທົ່າທຽມກັບມາດຕະການດ້ານສຸຂານາໄມພືດ ຂອງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
4. ແຈ້ງໃຫ້ຄະນະກຳມາທິການສົນທິສັນຍາປ້ອງກັນພືດສາກົນ ຫຼື ປະເທດສົ່ງອອກ ຢ່າງເປັນທາງການ ກ່ຽວກັບການປ່ຽນແປງລະບຽບກົດໝາຍທີ່ກ່ຽວຂ້ອງ, ມາດຕະການຮີບດ່ວນ ແລະ ຄວາມບໍ່ສອດຄ່ອງ ໃນກໍລະນີມີການຮ້ອງຂໍ;
5. ນຳໃຊ້ ຫລື ປະຕິບັດລະບຽບການກ່ຽວກັບ ການຮັບຮູ້ເຂດປອດສັດຕູພືດ, ເຂດສັດຕູພືດລະບາດຕໍ່າ, ພື້ນທີ່ ແລະ ສະຖານທີ່ຜະລິດປອດສັດຕູພືດຂອງປະເທດສົ່ງອອກ ເທື່ອລະກ້າວບົນພື້ນຖານຊັບພະຍາກອນທີ່ມີຢູ່ ແລະ ບໍ່ມີການຈຳແນກປະຕິບັດ;
6. ຈັດປະເພດສິນຄ້າ ສຳລັບການນຳເຂົ້າ ຕາມຄວາມສ່ຽງຂອງສັດຕູພືດ ແລະ ກຳນົດມາດຕະຖານໃນການຄັດເລືອກ ສຳລັບການຈັດປະເພດ ໃນລະບຽບການສະເພາະ.

**ມາດຕາ 18. ການຂໍອະນຸຍາດນຳເຂົ້າພືດ**

ການຂໍອະນຸຍາດນຳເຂົ້າພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ແລະ ການນຳເຂົ້າ ພືດຕ້ອງຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ຜູ້ນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ຂໍອະນຸຍາດນຳເຂົ້າ ຈາກອົງການຄຸ້ມຄອງວຽກງານປ້ອງກັນພືດຂັ້ນສູນກາງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການນຳເຂົ້າ ຈາກປະເທດທີ່ໄດ້ຮັບການຢັ້ງຢືນ ຫຼື ສົງໄສວ່າ ເປັນແຫຼ່ງທີ່ມາຂອງສັດຕູພືດກັກກັນ;
2. ການນຳເຂົ້າ ທີ່ຕ້ອງກັກກັນພາຍຫຼັງການນຳເຂົ້າ;
3. ການນຳເຂົ້າ ເພື່ອຈຸດປະສົງນຳໃຊ້ຂັ້ນສຸດທ້າຍສະເພາະໃດໜຶ່ງ ຫຼື ເພື່ອການຄົ້ນຄວ້າທົດລອງ;
4. ການນຳເຂົ້າ ເພື່ອແກ້ໄຂວິກິດການດ້ານມະນຸດສະທຳ ຫຼື ໄພພິບັດທາງທຳມະຊາດ;
5. ການນຳເຂົ້າ ທີ່ມີຄວາມຈຳເປັນຕ້ອງຕິດຕາມການຈໍລະຈອນພືດ, ຜະລິດຕະພັນພືດ ຫຼື ຄວບຄຸມ ໃນໄລຍະເວລາໃດໜຶ່ງ ພາຍຫຼັງການນຳເຂົ້າ.

ຜູ້ນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດຕໍ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕາມຮ່າງຄຳຮ້ອງ ແລະ ວິທີການ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຕ່າງຫາກ ແລະ ຜູ້ນຳເຂົ້າ ກໍຕ້ອງຍື່ນຄຳຮ້ອງຕໍ່ອົງການຄຸ້ມຄອງວຽກງານປ້ອງກັນພືດໃນວັນລັດຖະການ ຊຶ່ງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງໃຫ້ຄຳຕອບແກ່ຜູ້ນຳເຂົ້າ ພາຍໃນກຳນົດເວລາ ສິບວັນ ກ່ອນວັນນຳເຂົ້າຕົວຈິງ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕ້ອງພິຈາລະນາຄຳຮ້ອງ ພາຍໃນກຳນົດເວລາ ສິບວັນ ລັດຖະການ ແລະ ການພິຈາລະນາຄຳຮ້ອງ ກໍຕ້ອງປະຕິບັດຕາມຫຼັກການຄົ້ນຄວ້າພິຈາລະນາຄຳຮ້ອງຕາມລຳດັບຂອງການຍື່ນຄຳຮ້ອງ.

ໃນກໍລະນີປະຕິເສດການອອກໃບອະນຸຍາດນຳເຂົ້າ ແມ່ນໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ແຈ້ງໃຫ້ຜູ້ຮ້ອງຂໍຊາບຢ່າງເປັນລາຍລັກອັກສອນ ກ່ຽວກັບເຫດຜົນຂອງການປະຕິເສດດັ່ງກ່າວ ກ່ອນວັນນຳເຂົ້າຕົວຈິງ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ສາມາດທົບທວນ, ດັດແກ້ ຫຼື ຖອນໃບອະນຸຍາດນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ໄດ້ທຸກເວລາ ໂດຍຜ່ານການແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ນຳເຂົ້າຊາບ.

**ມາດຕາ 19. ຂັ້ນຕອນ ສຳລັບການນຳເຂົ້າ**

ຂັ້ນຕອນການນຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15, 16 ແລະ ມາດຕາ 17 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ຜູ້ນຳເຂົ້າ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ປະຕິບັດຕາມເງື່ອນໄຂ ທີ່ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ ແລະ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ຜູ້ນຳເຂົ້າ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ຕ້ອງນຳເຂົ້າ ຜ່ານດ່ານເຂົ້າ-ອອກ ທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດກຳນົດໄວ້. ຜູ້ນຳເຂົ້າ ສາມາດເລືອກນຳເຂົ້າຜ່ານດ່ານ ທີ່ເຫັນວ່າມີຄວາມສະດວກທີ່ສຸດ ໃນຈຳນວນດ່ານທີ່ກຳນົດໂດຍອົງການຄຸ້ມຄອງວຽກງານປ້ອງກັນພືດ ຍົກເວັ້ນກໍລະນີມີການກຳນົດໄວ້ສະເພາະໃນໃບອະນຸຍາດນຳເຂົ້າ ເທົ່ານັ້ນ.

ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍ ຫຼື ບໍ່ຈຳເປັນຂໍ ອະນຸຍາດນຳເຂົ້າ ຕ້ອງໄດ້ຮັບການກວດກາ ຢູ່ດ່ານປ້ອງກັນພືດ ໃນເວລາທີ່ນຳເຂົ້າຕົວຈິງ. ໃນກໍລະນີຕ້ອງຂໍໃບອະນຸຍາດນຳເຂົ້າ ໃຫ້ຜູ້ນຳເຂົ້າ ແຈ້ງໃບອະນຸຍາດນຳເຂົ້າ ແລະ ໃບຢັ້ງຢືນສຸຂານາໄມພືດ ທີ່ອອກໃຫ້ໂດຍປະເທດຕົ້ນທາງຕໍ່ເຈົ້າໜ້າທີ່ປ້ອງກັນພືດ ເພື່ອດຳເນີນການກວດກາ ສ່ວນໃນກໍລະນີທີ່ບໍ່ຕ້ອງຂໍອະນຸຍາດນຳເຂົ້ານັ້ນ ໃຫ້ຜູ້ນຳເຂົ້າແຈ້ງໃບຢັ້ງຢືນສຸຂານາໄມພືດ ທີ່ອອກໃຫ້ໂດຍປະເທດຕົ້ນທາງຕໍ່ເຈົ້າໜ້າທີ່ປ້ອງກັນພືດ ແລະ ເອກະສານອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ທີ່ອອກໂດຍ ອົງການຄຸ້ມຄອງວຽກງານປ້ອງກັນພືດ.

ໃນກໍລະນີຂໍ້ມູນສຳຄັນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມບໍ່ສອດຄ່ອງກັບຊຸດສິນຄ້າທີ່ນຳເຂົ້າຕົວຈິງ ໃຫ້ຜູ້ນຳເຂົ້າຍື່ນຂໍໃບອະນຸຍາດນຳເຂົ້າໃໝ່ ແລະ ໃນກໍລະນີດັ່ງກ່າວນັ້ນ ຫ້າມເຈົ້າໜ້າທີ່ປ້ອງກັນພືດ ອະນຸຍາດໃຫ້ນຳເຂົ້າ ຈົນກວ່າຜູ້ນຳເຂົ້າໄດ້ຮັບໃບອະນຸຍາດສະບັບໃໝ່. ສຳລັບຄ່າໃຊ້ຈ່າຍໃນການຝາກສາງ ແລະ ຄ່າໃຊ້ຈ່າຍອື່ນທີ່ຕິດພັນກັບການຖືກ ປະຕິເສດການນຳເຂົ້າ ແມ່ນເປັນພາລະຂອງຜູ້ນຳເຂົ້າທັງໝົດ.

ການອະນຸຍາດໃຫ້ຜູ້ນຳເຂົ້າຍື່ນຂໍໃບອະນຸຍາດນຳເຂົ້າໃໝ່ນັ້ນ ໃຫ້ນຳໃຊ້ສະເພາະແຕ່ກໍລະນີທີ່ບໍ່ມີຄວາມສ່ຽງສູງໃນການນຳເຂົ້າມາ ຫຼື ບໍ່ມີການແຜ່ລະບາດຂອງສັດຕູພືດຕ້ອງຄວບຄຸມ ສ່ວນກໍລະນີທີ່ມີຄວາມ

ສ່ຽງສູງ ຫຼື ມີການແຜ່ລະບາດຂອງສັດຕູພືດຕ້ອງຄວບຄຸມນັ້ນ ໃຫ້ເຈົ້າໜ້າທີ່ປ້ອງກັນພືດ ນຳໃຊ້ມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງດຳລັດສະບັບນີ້.

ໃນກໍລະນີທີ່ການນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ມີ ຫຼື ບໍ່ມີໃບອະນຸຍາດນຳເຂົ້າ, ບໍ່ມີໃບຢັ້ງຢືນສຸຂານາໄມພືດຖ້າຫາກຈຳເປັນ, ບໍ່ໄດ້ຜ່ານການກວດກາຈາກເຈົ້າໜ້າທີ່ປ້ອງກັນພືດໃນເວລານຳເຂົ້າຕົວຈິງ, ບໍ່ໄດ້ນຳເຂົ້າຜ່ານດ່ານທີ່ກຳນົດນັ້ນ ຜູ້ນຳເຂົ້າຈະຖືກປັບໃໝ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຂອງ ສປປ ລາວ ຕາມກໍລະນີເບົາ ຫຼື ໜັກ.

### ມາດຕາ 20. ການກວດກາການນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ

ການກວດກາການນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ17 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ການນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ທຸກຄັ້ງ ຕ້ອງຜ່ານການກວດກາຂອງເຈົ້າໜ້າທີ່ປ້ອງກັນພືດ ພາຍຫຼັງທີ່ຜູ້ນຳເຂົ້າແຈ້ງເອກະສານ ແລະ ກຳນົດເວລາເປັນລາຍລັກອັກສອນ ກ່ຽວກັບການນຳເຂົ້າຊຸດສິນຄ້າຕໍ່ເຈົ້າໜ້າທີ່ປ້ອງກັນພືດປະຈຳດ່ານ.

ເຈົ້າໜ້າທີ່ປ້ອງກັນພືດຕ້ອງກວດກາ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມທີ່ນຳເຂົ້າມາ ສປປ ລາວ. ໃນກໍລະນີເຈົ້າໜ້າທີ່ປ້ອງກັນພືດ ກວດກາ ແລະ ຢັ້ງຢືນວ່າ ສິນຄ້າດັ່ງກ່າວ ມີເອກະສານຄົບຖ້ວນຕາມເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ສອດຄ່ອງກັບມາດຕະການດ້ານສຸຂານາໄມພືດ ຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ ໃຫ້ອອກໃບແຈ້ງຜ່ານ ໃຫ້ແກ່ຜູ້ນຳເຂົ້າເພື່ອດຳເນີນການແຈ້ງພາສີ ໃນຂັ້ນຕອນຕໍ່ໄປ.

ກໍລະນີຜູ້ນຳເຂົ້າ ຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການນຳເຂົ້າດ້ານສຸຂານາໄມພືດຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ ຫຼື ປະກອບເອກະສານບໍ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໃຫ້ເຈົ້າໜ້າທີ່ປ້ອງກັນພືດ ແຈ້ງໃຫ້ຜູ້ນຳເຂົ້າຊາບທັນທີ ແລະ ປະຕິບັດຕາມມາດຕະການໃດໜຶ່ງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກັກພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ຈົນກວ່າຈະໄດ້ຮັບເອກະສານທີ່ຄົບຖ້ວນ, ຖືກຕ້ອງ ຫຼື ສຳເລັດການກວດກາ, ເກັບຕົວຢ່າງ ແລະ ການທົດສອບທີ່ຈຳເປັນ ທາງດ້ານວິຊາການ;
2. ໃຫ້ຜູ້ນຳເຂົ້າເຄື່ອນຍ້າຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ລວມທັງການໃຫ້ເຄື່ອນຍ້າຍໄປຍັງສະຖານີກັກກັນພືດ ຫຼື ສະຖານທີ່ອື່ນ ເພື່ອບຳບັດຕາມການກຳນົດຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ;
3. ໃຫ້ຜູ້ນຳເຂົ້າດຳເນີນການບຳບັດ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມດັ່ງກ່າວ;
4. ໃຫ້ຜູ້ນຳເຂົ້າຄັດເລືອກ, ແຍກປະເພດ ແລະ ສັບຊ້ອນພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມຢ່າງຖືກຕ້ອງ;
5. ປະຕິເສດການນຳເຂົ້າ ແລະ ສົ່ງໃຫ້ສົ່ງກັບຄືນປະເທດຕົ້ນທາງ;
6. ໃຫ້ປະຕິບັດມາດຕະການສຸກເສີນ ຊຶ່ງລວມທັງການທຳລາຍຖິ້ມ.

ເຈົ້າໜ້າທີ່ປ້ອງກັນພືດ ຕ້ອງແຈ້ງເຫດຜົນຂອງການປະຕິເສດ ໃບຢັ້ງຢືນສຸຂານາໄມພືດ ຕໍ່ຜູ້ນຳເຂົ້າຊາບ ຫຼື ແຈ້ງການຂໍຂໍ້ມູນພື້ນຖານເພີ່ມຕື່ມເປັນລາຍລັກອັກສອນ ໃນກໍລະນີເຫັນວ່າຈຳເປັນ ບົນພື້ນຖານທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ເຈົ້າໜ້າທີ່ປ້ອງກັນພືດ ຕ້ອງກວດກາ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຢູ່ດ່ານປ້ອງກັນພືດໃນໂມງລັດຖະການເທົ່ານັ້ນ ຍົກເວັ້ນກໍລະນີອື່ນທີ່ຈໍາເປັນ ກ່ຽວກັບການນໍາເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຕາມແຕ່ລະກໍລະນີ ດັ່ງນີ້:

- ເນົ່າເປື່ອຍງ່າຍ;
- ມີປະລິມານນໍາເຂົ້າຈໍານວນຫຼາຍ ແລະ ບໍ່ມີສາງ ຫຼື ສະຖານເກັບພຽງພໍ;
- ມີການຄ່ຽນຖ່າຍ;
- ມີການແຍກປ່ຽວ ຫຼື ກັກກັນ;
- ມີເຫດສຸດວິໃສ ທີ່ພາໃຫ້ຊັກຊ້າ ໃນເວລານໍາເຂົ້າ.

ເຈົ້າໜ້າທີ່ປ້ອງກັນພືດ ອາດກວດກາ ຢູ່ນອກດ່ານປ້ອງກັນພືດ ຫຼື ນອກໂມງລັດຖະການ ຕາມການຮ້ອງຂໍຈາກຜູ້ນໍາເຂົ້າ ຕາມແຕ່ລະກໍລະນີຈໍາເປັນ ຕາມທີ່ໄດ້ກໍານົດໄວ້ຂ້າງເທິງນີ້ ຊຶ່ງຜູ້ນໍາເຂົ້າຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ແລະ ການກວດກາດັ່ງກ່າວ ກໍຕ້ອງສໍາເລັດ ກ່ອນຂັ້ນຕອນການແຈ້ງພາສີ.

ໃນກໍລະນີທີ່ມີຄວາມຈໍາເປັນ ຕ້ອງກວດກາພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມສະເພາະໃດໜຶ່ງ ຫຼັງຈາກຂັ້ນຕອນການແຈ້ງພາສີນັ້ນ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ກໍານົດລະບຽບການສະເພາະ ໂດຍມີການແຈ້ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງປະຈໍາດ່ານ ແລະ ຜູ້ນໍາເຂົ້າຊາບ ກ່ອນການຈັດຕັ້ງປະຕິບັດ.

## ມາດຕາ 21. ການຮ່ວມມືຂອງພາກສ່ວນອື່ນ

ການຮ່ວມມືຂອງພາກສ່ວນອື່ນ ບົນພື້ນຖານການປະຕິບັດສິດ ແລະ ໜ້າທີ່ ຂອງພາກສ່ວນອື່ນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 47 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ບໍ່ອະນຸຍາດໃຫ້ເຈົ້າໜ້າທີ່ຂອງອົງການຈັດຕັ້ງອື່ນປະຈໍາດ່ານ ທີ່ບໍ່ໄດ້ຮັບການມອບໝາຍ ຫຼື ແຕ່ງຕັ້ງ ປ່ອຍ, ຫຼື ກໍາຈັດພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ທີ່ນໍາເຂົ້ານັ້ນ ໂດຍທີ່ບໍ່ໄດ້ຮັບການເຫັນດີຈາກເຈົ້າໜ້າທີ່ປ້ອງກັນພືດປະຈໍາດ່ານປ້ອງກັນພືດ ແລະ ພືດ, ຜະລິດຕະພັນພືດ ຫຼື ວັດຖຸອື່ນທີ່ກ່ຽວຂ້ອງ ກໍຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນຜ່ານດ່ານປ້ອງກັນພືດເສັຍກ່ອນ ຈຶ່ງສາມາດດໍາເນີນການແຈ້ງພາສີ ຕາມລະບຽບການທີ່ກ່ຽວຂ້ອງ.

ຜູ້ນໍາເຂົ້າ, ເຈົ້າໜ້າທີ່ກ່ຽວຂ້ອງປະຈໍາດ່ານ, ຜູ້ບໍລິການໄປສະນີ, ຜູ້ບໍລິການແຈ້ງພາສີ ແລະ ຜູ້ບໍລິການຂົນສົ່ງ ຍັງມີໜ້າທີ່ແຈ້ງຂໍ້ມູນກ່ຽວກັບພືດ, ຜະລິດຕະພັນພືດ ແລະ ວັດຖຸຄວບຄຸມ ທີ່ມາເຖິງດ່ານ ຕໍ່ເຈົ້າໜ້າທີ່ປ້ອງກັນພືດ.

## ມາດຕາ 22. ການແຈ້ງການນໍາເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຕິດຕົວຜູ້ໂດຍສານ

ການນໍາເຂົ້າພືດ ຕິດຕົວ ຫຼື ສິ່ງທາງໄປສະນີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ແລະ ການກວດກາພືດ ຕິດຕົວຜູ້ໂດຍສານ ຫຼື ສິ່ງທາງໄປສະນີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 25 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ບຸກຄົນ ຫຼື ອົງການຈັດຕັ້ງ ທີ່ນໍາເຂົ້າ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ເຂົ້າມາໃນ ສປປ ລາວ ແຈ້ງຕໍ່ເຈົ້າໜ້າທີ່ປ້ອງກັນພືດ ໃນເວລາທີ່ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມນັ້ນ ມາເຖິງດ່ານ ຫຼື ດ່ານກວດກາຂອງເຈົ້າໜ້າທີ່ພາສີ ໃນກໍລະນີທີ່ບໍ່ມີເຈົ້າໜ້າທີ່ປ້ອງກັນພືດປະຈໍາດ່ານ.

ຜູ້ໃຫ້ບໍລິການສາຍການບິນ, ລົດເມ, ລົດໄຟ, ເຮືອ ແລະ ການເດີນທາງໂດຍຮູບການອື່ນ ທີ່ເດີນທາງເຂົ້າມາ ສປປ ລາວ ຕ້ອງປະກາດກ່ຽວກັບລະບຽບການທີ່ຕ້ອງແຈ້ງ ລາຍການພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ໃຫ້ຜູ້ໂດຍສານ ຫຼື ຜູ້ເດີນທາງ ຊາບ.

ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕ້ອງພິມເຜີຍແຜ່ ແລະ ຕິດປະກາດຢູ່ດ່ານ ກ່ຽວກັບລະບຽບການນໍາເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຂອງ ສປປ ລາວ.

ພາຫະນະຂົນສົ່ງ ອາດມີຄວາມຈໍາເປັນຕ້ອງຜ່ານການຂ້າເຊື້ອ ຫຼື ບໍາບັດ ເມື່ອນໍາເຂົ້າມາໃນ ສປປ ລາວ ໃນກໍລະນີ ທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ເຫັນວ່າ ມີຄວາມຈໍາເປັນ ບົນພື້ນຖານການວິເຄາະຄວາມສ່ຽງຂອງສັດຕູພືດ.

ກໍລະນີຜູ້ນໍາເອົາພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ເຂົ້າມາໃນ ສປປ ລາວ ໂດຍບໍ່ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້ ໃຫ້ເຈົ້າໜ້າທີ່ປ້ອງກັນພືດ ກ່າວເຕືອນ ແລະ ເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 23. ການສົ່ງຜ່ານໄປສະນີ**

ການນໍາສົ່ງຜ່ານໄປສະນີ ຕາມທີ່ໄດ້ກໍານົດໄວ້ໃນໝວດທີ 5 ມາດຕາ 24 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງໝາຍເຖິງ ໃຫ້ບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນຜູ້ຮັບເອົາພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ທີ່ສົ່ງຜ່ານທາງໄປສະນີ ເຂົ້າມາ ສປປ ລາວ ແຈ້ງລາຍການພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມດັ່ງກ່າວ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງປະຈໍາຢູ່ຫ້ອງການໄປສະນີ ໃນເວລາທີ່ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມນັ້ນມາເຖິງ ຫ້ອງການໄປສະນີ ແລະ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ປະຈໍາຢູ່ຫ້ອງການໄປສະນີນັ້ນ ແຈ້ງໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດຊາບ.

ກໍລະນີຜູ້ທີ່ຮັບເອົາພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມນັ້ນ ຫາກບໍ່ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງປະຈໍາຢູ່ຫ້ອງການໄປສະນີ ກ່າວເຕືອນ, ເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ 4
## ຊຸດສິນຄ້າຜ່ານແດນ

**ມາດຕາ 24. ການນໍາເຂົ້າຊຸດສິນຄ້າຜ່ານແດນ**

ການນໍາເຂົ້າຊຸດສິນຄ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຜ່ານ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຕ້ອງໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກເຈົ້າໜ້າທີ່ປ້ອງກັນພືດ ປະຈໍາດ່ານ ຂອງ ສປປ ລາວ.

ເຈົ້າຂອງ ຫຼື ບຸກຄົນທີ່ຮັບຜິດຊອບຊຸດສິນຄ້າດັ່ງກ່າວ ຕ້ອງຍື່ນຄໍາຮ້ອງ ແລະ ເສຍຄ່າບໍລິການ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ.

ຊຸດສິນຄ້າທີ່ສົ່ງຜ່ານ ທີ່ມີຄວາມສ່ຽງຂອງສັດຕູພືດ ຫຼື ບໍ່ສອດຄ່ອງ ຕາມລະບຽບການກ່ຽວກັບການຄຸ້ມຄອງວຽກງານປ້ອງກັນພືດ ອາດຖືກປະຕິເສດບໍ່ໃຫ້ນໍາຜ່ານ ສປປ ລາວ ຫຼື ອາດຖືກປະຕິບັດມາດຕະການດ້ານສຸຂານາໄມພືດສຸກເສີນ ເພື່ອປ້ອງກັນການແຜ່ກະຈາຍ ຂອງສັດຕູພືດຕ້ອງຄວບຄຸມ ແລະ ໃຫ້

ອົງການຄຸ້ມຄອງວຽກງານປ້ອງກັນພືດ ແຈ້ງໃຫ້ປະເທດຕົ້ນທາງ ແລະ ປະເທດປາຍທາງຂົນສົ່ງ ຊາບ ຖ້າຫາກເຫັນວ່າ ມີຄວາມຈຳເປັນ ໃນກໍລະນີທີ່ນຳໃຊ້ ຫຼື ປະຕິບັດມາດຕະການດັ່ງກ່າວ.

**ມາດຕາ 25. ການນຳໃຊ້ມາດຕະການດ້ານສຸຂານາໄມພືດ**

ການນຳໃຊ້ມາດຕະການດ້ານສຸຂານາໄມພືດ ໃນເວລາກວດກາ ພືດຜ່ານແດນ ຕາມທີ່ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ແມ່ນບໍ່ໃຫ້ປະຕິບັດ ຫຼື ນຳໃຊ້ມາດຕະການດັ່ງກ່າວຕໍ່ຊຸດສິນຄ້າ ໃນເວລາສົ່ງຜ່ານ ສປປ ລາວ ໃນແຕ່ລະກໍລະນີ ດັ່ງນີ້:

1. ການຫຸ້ມຫໍ່ ທີ່ຮັບປະກັນຕໍ່ການເກີດຄວາມສ່ຽງຕໍ່ການລະບາດຂອງສັດຕູພືດຄວບຄຸມ ທີ່ອາດເກີດຈາກຊຸດສິນຄ້າດັ່ງກ່າວ;
2. ສອດຄ່ອງກັບເງື່ອນໄຂດ້ານສຸຂານາໄມພືດ ຂອງປະເທດປາຍທາງ;
3. ມີໃບຢັ້ງຢືນສຸຂານາໄມພືດ ຕິດຕາມມານຳ ທີ່ອອກໂດຍປະເທດຕົ້ນທາງ.

## ໝວດທີ 5
## ການສົ່ງອອກ

**ມາດຕາ 26. ການກວດກາ ແລະ ການຢັ້ງຢືນການສົ່ງອອກ**

ການກວດກາ ແລະ ການຢັ້ງຢືນການສົ່ງອອກ ຕ້ອງປະຕິບັດຕາມມາດຕາ 19, 20 ແລະ ມາດຕາ 21 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງດຳລັດສະບັບນີ້ ທີ່ໄດ້ຮັບການມອບໝາຍ ຫຼື ແຕ່ງຕັ້ງ ເປັນຜູ້ກວດກາ, ທົດສອບ ແລະ ບຳບັດ ແລ້ວໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

1. ອອກໃບຢັ້ງຢືນສຸຂານາໄມພືດ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເງື່ອນໄຂທາງດ້ານສຸຂານາໄມພືດຂອງປະເທດນຳເຂົ້າ;
2. ອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ໃນກໍລະນີທີ່ຊຸດສິນຄ້າຖືກນຳເຂົ້າແລ້ວສົ່ງອອກຕໍ່ ໄປຍັງປະເທດທີສາມ.

ຜູ້ສົ່ງອອກຕ້ອງຍື່ນຄຳຮ້ອງຕາມແບບຄຳຮ້ອງ ແລະ ເອກະສານກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນບົດແນະນຳການຢັ້ງຢືນການສົ່ງອອກ ຕໍ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ແລະ ຕ້ອງນຳເອົາສິນຄ້າໄປກວດກາ. ຜູ້ສົ່ງອອກ ເປັນຜູ້ຮັບຜິດຊອບຈ່າຍຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ. .

ພາຍຫຼັງທີ່ໄດ້ຮັບຄຳຮ້ອງແລ້ວ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ກວດກາ, ທົດສອບ ແລະ ບຳບັດພືດ ໂດຍບໍ່ໃຫ້ແກ່ຍາວເວລາຢ່າງບໍ່ມີເຫດຜົນ ແລະ ຫ້າມບຸກຄົນໃດໜຶ່ງ ນອກຈາກເຈົ້າໜ້າທີ່ປ້ອງກັນພືດທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຄຸ້ມຄອງວຽກງານປ້ອງກັນພືດ ຂັ້ນສູນກາງ ອອກໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມພືດ ສົ່ງອອກຕໍ່.

ເມື່ອໄດ້ຮັບບົດລາຍງານຜົນການກວດກາແລ້ວ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ອອກໃບຢັ້ງຢືນສຸຂານາໄມພືດສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ ໃນກໍລະນີທີ່ຊຸດສິນຄ້າດັ່ງກ່າວ ຖືກຕ້ອງຕາມ

ເງື່ອນໄຂສຸຂານາໄມພືດຂອງປະເທດນຳເຂົ້າ ຫຼື ແຈ້ງການເປັນລາຍລັກອັກສອນ ເພື່ອໃຫ້ຜູ້ສົ່ງອອກຊາບ ໃນກໍລະນີທີ່ມີການປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່.

ພາຍຫຼັງທີ່ໄດ້ຮັບໃບຢັ້ງຢືນສຸຂານາໄມພືດສຳລັບການສົ່ງອອກ ຫຼື ສົ່ງອອກຕໍ່ແລ້ວ ຜູ້ສົ່ງອອກ ຕ້ອງສົ່ງອອກຊຸດສິນຄ້າ ຕາມການແນະນຳຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ ເພື່ອຮັບປະກັນຄວາມຄົບຖ້ວນ, ຖືກຕ້ອງ ແລະ ຄວາມປອດໄພດ້ານສຸຂານາໄມພືດ ພາຍຫຼັງການຢັ້ງຢືນ.

ໃນກໍລະນີທີ່ການສົ່ງອອກຕໍ່ນັ້ນ ຕ້ອງຄັດຕິດເອກະສານ ແລະ ໃບຢັ້ງຢືນສຸຂານາໄມພືດ ສະບັບຕົ້ນທັງໝົດ ທີ່ອອກໃຫ້ໂດຍປະເທດຕົ້ນທາງ ໄປນຳຊຸດສິນຄ້າດັ່ງກ່າວ.

## ໝວດທີ 6
## ທຸລະກິດດ້ານສຸຂານາໄມພືດ

### ມາດຕາ 27. ທຸລະກິດດ້ານສຸຂານາໄມພືດ

ທຸລະກິດດ້ານສຸຂານາໄມພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31, 32, 33 ແລະ ມາດຕາ 34 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ບຸກຄົນ ຫຼື ອົງການຈັດຕັ້ງທີ່ມີຈຸດປະສົງດຳເນີນທຸລະກິດດ້ານສຸຂານາໄມພືດ ຕ້ອງຂໍອະນຸຍາດຂຶ້ນທະບຽນດ້ານເຕັກນິກວິຊາການ ໂດຍປະຕິບັດຕາມລະບຽບການ ແລະ ເງື່ອນໄຂການປະຕິບັດງານ ທີ່ກຳນົດອອກໂດຍ ອົງການຄຸ້ມຄອງວຽກງານປ້ອງກັນພືດ ຂັ້ນສູນກາງ.

ບຸກຄົນ ຫຼື ອົງການຈັດຕັ້ງໃດກໍ່ຕາມ ບໍ່ມີສິດດຳເນີນກິດຈະການດ້ານສຸຂານາໄມພືດ ດັ່ງນີ້:

1. ການອອກໃບຢັ້ງຢືນສຸຂານາໄມພືດ ຫຼື ເອກະສານທາງການອື່ນ;
2. ການຮັບຮອງມາດຕະຖານ, ຂໍ້ບັງຄັບ, ກົດລະບຽບ ຫຼື ມາດຕະການກ່ຽວກັບສຸຂານາໄມພືດ;
3. ການພົວພັນກັບ ອົງການສາກົນທີ່ກ່ຽວຂ້ອງ ຫຼື ຄວາມຮັບຜິດຊອບໃນການ ອອກແຈ້ງການຕ່າງໆ,
4. ໜ້າທີ່ອື່ນ ທີ່ກຳນົດໄວ້ໃນລະບຽບການສະເພາະ.

ທຸລະກິດສຸຂານາໄມພືດ ຕ້ອງໄດ້ຮັບການກວດກາ ຢ່າງເປັນປົກກະຕິ ໂດຍອົງການຄຸ້ມຄອງວຽກງານປ້ອງກັນພືດ. ໃນກໍລະນີທີ່ບໍ່ສາມາດປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ຍົກເລີກໃບອະນຸຍາດ ຫຼື ໃບທະບຽນ ແລະ ບຸກຄົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ສາມາດສະເໜີຂໍອະນຸຍາດ ຫຼື ຂຶ້ນທະບຽນໃໝ່ ພາຍຫຼັງທີ່ປັບປຸງໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ ແລະ ປະຕິບັດຕາມຄຳແນະນຳຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ.

### ມາດຕາ 28. ຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ

ການເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນມາດຕາ 46 ຂໍ້ 7 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໃຫ້ປະຕິບັດຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການຂອງປະທານປະເທດ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

# ໝວດທີ 7
# ການຈັດຕັ້ງປະຕິບັດວຽກງານປ້ອງກັນພືດ

### ມາດຕາ 29. ການຈັດຕັ້ງ ຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ

ການຈັດຕັ້ງຂອງອົງການຄຸ້ມຄອງວຽກງານປ້ອງກັນພືດ ສຳລັບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນພືດ ຕາມທີ່ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ປະກອບດ້ວຍ:

1. ຂັ້ນສູນກາງ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ໂດຍມີກົມປູກຝັງ ເປັນຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ;
2. ຂັ້ນແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ໂດຍມີຂະແໜງປູກຝັງເປັນຜູ້ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍວ່າດ້ວຍ ການປ້ອງກັນພືດ;
3. ຂັ້ນເມືອງ, ເທດສະບານ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ ໂດຍມີໜ່ວຍງານປູກຝັງ ເປັນຜູ້ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ;
4. ດ່ານປ້ອງກັນພືດ ເປັນຜູ້ຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວຕາມສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ.

### ມາດຕາ 30. ການສ້າງຕັ້ງດ່ານປ້ອງກັນພືດ

ການສ້າງຕັ້ງດ່ານປ້ອງກັນພືດ ຕາມທີ່ກຳນົດໄວ້ໃນມາດຕາ 43 ຂໍ້ 5 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ ການສ້າງຕັ້ງດ່ານປ້ອງກັນພືດ, ສະຖານທີ່ກັກກັນພືດ ແລະ ຫ້ອງວິໄຈສັດຕູພືດ ຢູ່ດ່ານເຂົ້າ ຫຼື ອອກ ລະຫວ່າງປະເທດ ໂດຍແມ່ນອົງການຄຸ້ມຄອງວຽກປ້ອງກັນພືດ ຂັ້ນສູນກາງ ເປັນຜູ້ອະນຸມັດສ້າງຕັ້ງ.

ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນພືດ ຂັ້ນສູນກາງ ເປັນຜູ້ຄົ້ນຄວ້າພິຈາລະນາໂຄງປະກອບ ແລະ ແຕ່ງຕັ້ງບຸກຄະລາກອນ ປະຈຳດ່ານປ້ອງກັນພືດໂດຍປະສານສົມທົບກັບອົງການຄຸ້ມຄອງວຽກງານປ້ອງກັນພືດ ແຂວງ, ນະຄອນ.

ໂຄງປະກອບບຸກຄະລາກອນຂອງດ່ານປ້ອງກັນພືດ ປະກອບມີ ຫົວໜ້າ, ຮອງຫົວໜ້າ ແລະ ເຈົ້າໜ້າທີ່ປ້ອງກັນພືດຈຳນວນໜຶ່ງ ຊຶ່ງມີກຳນົດເວລາໃນການປະຕິບັດໜ້າທີ່ ປະຈຳດ່ານ ໜຶ່ງປີ ແລະ ສືບຕໍ່ປະຕິບັດໜ້າທີ່ໄດ້ອີກ ໜຶ່ງປີ ເທົ່ານັ້ນ.

### ມາດຕາ 31. ມາດຕະຖານ ຂອງດ່ານປ້ອງກັນພືດ

ການສ້າງຕັ້ງດ່ານປ້ອງກັນພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ນອກຈາກມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວໃນມາດຕາ 46 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ ແລ້ວ ຍັງຕ້ອງປະກອບດ້ວຍມາດຕະຖານ ດັ່ງນີ້:

1. ຫ້ອງການ ພ້ອມດ້ວຍອຸປະກອນຮັບໃຊ້ຫ້ອງການ ເປັນຕົ້ນ ຄອມພິວເຕີ, ລະບົບອິນເຕີເນັດ, ໂທລະສັບ, ແຟັກ ແລະ ອຸປະກອນອຳນວຍຄວາມສະດວກອື່ນ;

2. ຫ້ອງວິໄຈສັດຕູພືດ ພ້ອມດ້ວຍກ້ອງຈຸລະທັດ, ເຄື່ອງມືກວດກາ ແລະ ເກັບຕົວຢ່າງ ຂັ້ນພື້ນຖານ;
3. ສະຖານທີ່ສໍາລັບດໍາເນີນການກວດກາ;
4. ສະຖານທີ່ ແລະ ອຸປະກອນ ບໍລິການສຸຂານາໄມພືດ ເປັນຕົ້ນ ອຸປະກອນສໍາລັບອົບອາຍຮ້ອນ, ອາຍເຢັນ, ຮົມສານເຄມີ ແລະ ອຸປະກອນອື່ນ ຕາມຫຼັກວິຊາການ;
5. ສະຖານກັກກັນພືດ ສໍາລັບກັກພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນທີ່ມີຄວາມສ່ຽງ ຫຼື ຕິດແປດສັດຕູພືດຕ້ອງຫ້າມ ພາຍຫຼັງການນໍາເຂົ້າ ລວມທັງສະຖານທີ່ກໍາຈັດ, ເຜົາ ຫຼື ທໍາລາຍຖິ້ມ;

**ມາດຕາ 32. ມາດຕະຖານ ຂອງເຈົ້າໜ້າທີ່ປ້ອງກັນພືດ**

ເຈົ້າໜ້າທີ່ປ້ອງກັນພືດ ຕາມທີ່ໄດ້ກໍານົດໄວໃນກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ນອກຈາກ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 35 ຂອງກົດໝາຍປ້ອງກັນພືດແລ້ວ ຍັງຕ້ອງປະກອບດ້ວຍມາດຕະຖານ ດັ່ງນີ້:

1. ຜ່ານການຝຶກອົບຮົມ ວິຊາການດ້ານກັກກັນພືດ ຕາມຫລັກສູດ ແລະ ມາດຕະຖານຂອງພາກພື້ນ ແລະ ສາກົນ ທີ່ຈັດໂດຍ ກົມປູກຝັງ ກະຊວງກະສິກໍາ ແລະ ປ່າໄມ້;
2. ມີປະກາສະນິຍະບັດ ຈົບວິຊາສະເພາະຊັ້ນສູງຂຶ້ນໄປ ດ້ານປູກຝັງ ຫຼື ປ້ອງກັນພືດ;
3. ມີປະສົບການດ້ານວຽກງານ ກ່ຽວກັບການປູກຝັງ ຫຼື ການປ້ອງກັນພືດ ສອງປີ ຂຶ້ນໄປ;
4. ມີຄວາມຮູ້ດ້ານກົດໝາຍວ່າດ້ວຍການປ້ອງກັນພືດ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ ໃນລະດັບອັນແນ່ນອນ;
5. ຮູ້ພາສາອັງກິດ ຫລື ພາສາຕ່າງປະເທດອື່ນ ທີ່ກ່ຽວຂ້ອງ ໃນລະດັບດີ;
6. ມີສຸຂະພາບແຂງແຮງດີ.

**ມາດຕາ 33. ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ປ້ອງກັນພືດ**

ນອກຈາກສິດ ແລະ ໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ປ້ອງກັນພືດ ຕາມທີ່ໄດ້ກໍານົດໄວ້ໃນໃນມາດຕາ 35 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ເຈົ້າໜ້າທີ່ປ້ອງກັນພືດ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາພືດ ຢູ່ດ່ານປ້ອງກັນພືດ, ສະຖານກັກກັນພືດ, ສາງ, ສະຖານີລົດຂົນສົ່ງໂດຍສານ, ຫ້ອງການໄປສະນີ, ສະໜາມບິນ, ສະຖານີລົດໄຟ, ທ່າເຮືອ, ຟາມ ແລະ ພື້ນທີ່ປູກພືດ ແຕ່ຫ້າມເຂົ້າໄປໃນເຮືອນ ຫຼື ທີ່ຢູ່ອາໄສ;
2. ລົງລາຍເຊັນໃສ່ເອກະສານທີ່ກ່ຽວຂ້ອງຕາມຄວາມຮັບຜິດຊອບຂອງຕົນ;
3. ສັ່ງຫ້າມການແຈກຢາຍ, ຈໍາໜ່າຍ ຫຼື ນໍາໃຊ້ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ແລະ ຍຶດວັດຖຸດັ່ງກ່າວ ຖ້າເຫັນວ່າ ມີຄວາມສ່ຽງໃນແຜ່ກະຈາຍ ຂອງສັດຕູພືດຄວບຄຸມ ຫຼື ໃນກໍລະນີ ເຫັນວ່າ ມີການນໍາເອົາວັດຖຸດັ່ງກ່າວ ເຂົ້າມາໃນ ສປປ ລາວ ຢ່າງ ຜິດກົດໝາຍ;
4. ຂໍຄວາມຊ່ວຍເຫຼືອ ຈາກເຈົ້າໜ້າທີ່ຕໍາຫຼວດ ໃນກໍລະນີທີ່ຈໍາເປັນ;
5. ເຂົ້າຮ່ວມການຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ ກ່ຽວກັບວຽກວິຊາສະເພາະຂອງຕົນ.

ມາດຕາ 34. ຄວາມຮັບຜິດຊອບ ແລະ ການຮ້ອງທຸກ

ໃນການນຳໃຊ້ມາດຕະການຄວບຄຸມການແຜ່ລະບາດ ຂອງສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂໍ້ 3 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງອົງການຄຸ້ມຄອງວຽກງານປ້ອງກັນພືດ ບໍ່ມີຄວາມຮັບຜິດຊອບໃນການໃຊ້ແທນຄ່າເສັຍຫາຍ ທີ່ເກີດຈາກການທຳລາຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ຍົກເວັ້ນກໍລະນີມີ ຄຳຕັດສິນ ຂອງສານ ຫຼື ມີການຕົກລົງເຫັນດີຈາກລັດຖະບານ.

ເຈົ້າຂອງພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມອື່ນ ສາມາດຍື່ນຄຳຮ້ອງທຸກ ໄປຍັງອົງການຄຸ້ມຄອງວຽກງານປ້ອງກັນພືດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ຖ້າຫາກເຫັນວ່າເຈົ້າໜ້າທີ່ປ້ອງກັນພືດປະຕິບັດໜ້າທີ່ ຫຼື ໃຊ້ອຳນາດເກີດຂອບເຂດ ໃນການອອກຄຳສັ່ງໃຫ້ທຳລາຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

## ໝວດທີ 8
## ບົດບັນຍັດສຸດທ້າຍ

ມາດຕາ 35 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 36. ຜົນສັກສິດ

ດຳລັດສະບັບນີ້ມີຜົນສັກສິດ ພາຍຫຼັງ ຮ້ອຍແປດສິບວັນ ນັບຈາກວັນລົງລາຍເຊັນເປັນຕົ້ນໄປ.
ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ
ເຊັນແທນ ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★

ອາຊາງ ລາວລີ